ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ...708.../ຈຂ.ຈສ

ແຂວງຈຳປາສັກ, ວັນທີ..30../..5..../2019

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາທີ່ດິນປ່າໄມ້ ທົ່ວແຂວງ

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ ສະບັບປັບປຸງເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;

- ອີງຕາມ ມະຕິຂອງກອງປະຊຸມສະພາປະຊາຊົນແຂວງ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາທີ່ດິນປ່າໄມ້ ທົ່ວແຂວງ ສະບັບເລກທີ 17/ຄປຈ.ສພຂ, ລົງວັນທີ 03 ພຶດສະພາ 2019.

**ເຈົ້າແຂວງໆ ຈຳປາສັກ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການພື້ນຖານ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້, ກວດກາທີ່ດິນປ່າໄມ້ແບບຍືນຍົງ, ສົ່ງເສີມການຟື້ນຟູ, ປູກໄມ້ ແລະ ຂະຫຍາຍຊັບພະຍາກອນປ່າໄມ້ ຢູ່ແຂວງຈຳປາສັກ ແນໃສ່ຮັບປະກັນ ໃຫ້ບັນລຸຄາດໝາຍຄວາມປົກຫຸ້ມປ່າໄມ້ 70% ໃນປີ 2030 ທີ່ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດໄວ້ ເພື່ອເຮັດໃຫ້ທຳມະຊາດມີຄວາມສົມດຸນ, ເຮັດໃຫ້ທີ່ດິນປ່າໄມ້ເປັນແຫຼ່ງທຳມາຫາກິນແລະນຳໃຊ້ຂອງປະຊາຊົນໂດຍບໍ່ບົກແຫ້ງ ທັງຮັບປະກັນການປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນ, ຮັກສາຄຸນະພາບຂອງດິນ, ປົກປັກຮັກສາແນວພັນ, ຕົ້ນໄມ້, ສັດນ້ຳ-ສັດປ່າ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ຂອງແຂວງໃຫ້ຂະຫຍາຍຕົວຂຶ້ນເລື້ອຍໆ.

**ມາດຕາ 2 ການຄຸ້ມຄອງ ແລະ ການພັດທະນາ ທີ່ດິນປ່າໄມ້**

ອົງການປົກຄອງແຂວງ ມອບໃຫ້ ຂະແໜງກະສິກຳ ແລະ ປ່າໄມ້ ເປັນຕົວແທນຄຸ້ມຄອງ ແລະ ພັດທະນາທີ່ດິນປ່າໄມ້ໂດຍສ້າງກົນໄກປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມຄົ້ນຄວ້າລະບຽບ,ນະໂຍບາຍ, ວິທີການ ແລະ ມາດຕະການຕ່າງໆໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ແລະການພັດທະນາທີ່ດິນປ່າໄມ້ ໃຫ້ສົມດຸນກັບລະບົບນິເວດປ່າໄມ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ທີ່ດິນປ່າໄມ້ ໝາຍເຖິງ** ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;

2. **ການຫັນປ່ຽນທີ່ດິນປ່າໄມ້ ໝາຍເຖິງ** ການຫັນປ່ຽນຈາກປະເພດທີ່ດິນປ່າໄມ້ ໄປສູ່ທີ່ດິນປະເພດອື່ນ ແລະ ຈຸດປະສົງອື່ນ;

3. **ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ໝາຍເຖິງ** ການນຳໃຊ້ທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການປ່າໄມ້ ເຊັ່ນ: ຟື້ນຟູປ່າ, ປູກປ່າ, ເລື້ອງປ່າຂອງດົງ ແລະ ຕົ້ນໄມ້ອຸດສາຫະກຳ;

4. **ທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ ແລະ ທີ່ດິນປ່າຜະລິດ ໝາຍເຖິງ** ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດ ໄດ້ກຳນົດໃຫ້ເປັນທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ ແລະ ທີ່ດິນປ່າຜະລິດ;

5. **ທີ່ດິນປ່າຊຸດໂຊມ ໝາຍເຖິງ** ເນື້ອທີ່ດິນປ່າໄມ້ ທີ່ປ່າໄມ້ໄດ້ຖືກທຳລາຍຢ່າງໜັກ ແລະ ເນື່ອງນິດລຽນຕິດ ເຮັດໃຫ້ເສຍຄວາມຄຸ້ມຄ່າທາງດ້ານອິນຊີວັດຖຸ ຊຶ່ງເຮັດໃຫ້ປ່າໄມ້ບໍ່ສາມາດຟື້ນຄືນເອງຕາມທຳມະຊາດ ມາເປັນປ່າອຸດົມສົມບູນໄດ້ອີກ. ພືດ ແລະ ຕົ້ນໄມ້ທີ່ເກີດໃນດິນປ່າໄມ້ຊຸດໂຊມສ່ວນໃຫຍ່ຈະແມ່ນຫຍ້າຄາ, ຕົ້ນໄມ້ຕິ້ວ, ໄມ້ປ້ອງຂະໜາດນ້ອຍ ຫຼື ຕົ້ນແຂມອື່ນໆ;

6. **ທີ່ດິນປ່າປອກໂຫຼ້ນ ໝາຍເຖິງ** ເນື້ອທີ່ດິນປ່າໄມ້ທີ່ບໍ່ມີຕົ້ນໄມ້ ຊຶ່ງເກີດຂຶ້ນຍ້ອນທຳມະຊາດ ຫຼື ການທຳລາຍຂອງຄົນ;

7. **ການພັດທະນາທີ່ດິນປ່າໄມ້ ໝາຍເຖິງ** ການປັບປຸງຄຸນນະພາບຂອງດິນຈາກດິນທີ່ຊຸດໂຊມໃຫ້ກາຍເປັນດິນທີ່ອຸດົມສົມບູນ;

8. **ເຂດຫວງຫ້າມເດັດຂາດ ໝາຍເຖິງ** ເຂດດິນປ່າໄມ້ ຊຶ່ງເປັນບ່ອນອາໃສ, ຫາກິນ ແລະ ຂະຫຍາຍພັນຂອງສັດຕ່າງໆ ແລະ ເປັນບ່ອນທີ່ມີພັນພືດ ທີ່ຫຼາກຫຼາຍ ແລະ ດົກໜາ. ໃນເຂດນີ້ບໍ່ອະນຸຍາດໃຫ້ດຳເນີນກິດຈະການປ່າໄມ້, ເກັບກູ້ຜົນຜະລິດປ່າໄມ້ ລວມທັງການເຂົ້າໄປໃນເຂດດັ່ງກ່າວ ຢ່າງເດັດຂາດ ໂດຍບໍ່ໄດ້ຮັບອະນຸຍາດ;

9. **ເຂດຄຸ້ມຄອງນຳໃຊ້ ໝາຍເຖິງ** ເຂດດິນປ່າໄມ້ ທີ່ຖືກຈັດສັນໄວ້, ເປັນເຂດທີ່ຢູ່ຕິດຈອດ ຫຼື ໃກ້ຄຽງກັບເຂດຫວງຫ້າມເດັດຂາດ. ໃນເຂດນີ້ ຕ້ອງໄດ້ປົກປັກຮັກສາຄືກັນກັບເຂດຫວງຫ້າມເດັດຂາດ, ແຕ່ຫາກອະນຸຍາດ ໃຫ້ປະຊາຊົນໃນພື້ນທີ່ໄດ້ນຳໃຊ້ໄມ້ ແລະ ຜະລິດຕະພັນປ່າໄມ້ ຕາມແຜນຈັດສັນ ເທົ່ານັ້ນ;

10. **ເຂດເຊື່ອມຕໍ່ ໝາຍເຖິງ** ເຂດດິນປ່າໄມ້ ທີ່ ຈັດສັນໄວ້ເພື່ອປົກປັກຮັກສາທາງທຽວຂອງສັດປ່າລະຫວ່າງປ່າແຕ່ລະປະເພດ ແລະ ເພື່ອໃຫ້ມີການຄົງຕົວ ແລະ ການຂະຫຍາຍຕົວຂອງສັດປ່າ. ໃນເຂດປ່າໄມ້ນີ້ ແມ່ນຫ້າມບໍ່ໃຫ້ຕັດຕົ້ນໄມ້, ດຳເນີນກິດຈະການດ້ານປ່າໄມ້ ຫຼື ກິດຈະການອື່ນທີ່ເປັນການກີດຂວາງ ຫຼື ທຳລາຍທາງທຽວຂອງສັດປ່າ;

11. **ເຂດກັນຊົນ ໝາຍເຖິງ** ເຂດທີ່ດິນປ່າໄມ້ ຊຶ່ງຢູ່ອ້ອມຮອບປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດແຕ່ໜຶ່ງຮ້ອຍ ຫາ ຫ້າຮ້ອຍແມັດ.

**ມາດຕາ 4 ຫຼັກການກ່ຽວກັບການຄຸ້ມຄອງ ແລະ ການພັດທະນາເຂດທີ່ດິນປ່າໄມ້**

ການຄຸ້ມຄອງ,ການປົກປັກຮັກສາ ແລະ ການພັດທະນາທີ່ດິນປ່າໄມ້ ຮັບປະກັນໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດຂອງແຂວງ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ;

3. ປົກປັກຮັກສາ, ຟື້ນຟູ, ພັດທະນາທີ່ດິນປ່າໄມ້, ແຫຼ່ງນ້ຳ, ຊີວະນາໆພັນ ແລະ ສິ່ງແວດລ້ອມໃຫ້ອຸດົມສົມບູນໂດຍມີສ່ວນຮ່ວມຈາກທຸກພາກສ່ວນໃນສັງຄົມ;

4. ຮັບປະກັນຜົນປະໂຫຍດຂອງລັດ, ການຈັດຕັ້ງ ແລະບຸກຄົນທີ່ປົກປັກຮັກສາ, ພັດທະນາທີ່ດິນປ່າໄມ້ ຕາມກົດໝາຍ ແລະ ລະບຽບການ;

5. ຮັບປະກັນການນຳໃຊ້ທີ່ດິນປ່າໄມ້ໃຫ້ມີປະສິດທິຜົນ,ປະຢັດ, ຍືນຍົງ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;

6. ສົມທົບຍຸດທະສາດການພັດທະນາທີ່ດິນປ່າໄມ້ຂອງແຂວງກໍຄືຂອງປະເທດ ໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານກ່ຽວກັບທີ່ດິນປ່າໄມ້ໃນແຂວງຈຳປາສັກ.

## ໝວດທີ 2
## ການຄຸ້ມຄອງ ການນຳໃຊ້ທີ່ດິນປ່າໄມ້

**ມາດຕາ 6 ການຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້**

ຂະແໜງກະສິກຳ ແລະປ່າໄມ້ ເປັນຜູ້ຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້, ກຳນົດປະເພດດິນປ່າໄມ້ປະເພດຕ່າງໆໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 7 ປະເພດທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ຢູ່ພາຍໃນແຂວງຈຳປາສັກ ແບ່ງອອກເປັນ ສາມປະເພດຄື:

1. ທີ່ດິນປ່າສະຫງວນ;
2. ທີ່ດິນປ່າປ້ອງກັນ;
3. ທີ່ດິນປ່າຜະລິດ.

ໃນສາມປະເພດທີ່ດິນປ່າໄມ້ນີ້ກວມເອົາທີ່ດິນປ່າໄມ້ຕຶບໜາ, ທີ່ດິນປ່າໂຄກ,ທີ່ດິນປ່າຊຸດໂຊມຫຼືທີ່ດິນປ່າປອກໂຫຼ້ນແລະທີ່ດິນປ່າຊົມໃຊ້ຂອງບ້ານ.

**ມາດຕາ 8 ການສຳຫຼວດທີ່ດິນປ່າໄມ້**

ການສຳຫຼວດທີ່ດິນປ່າໄມ້ ແມ່ນເພື່ອກຳນົດເນື້ອທີ່ດິນປ່າໄມ້ປະເພດຕ່າງໆທັງໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ, ກຳນົດເຂດອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ ເພື່ອປູກໄມ້ ແລະ ເຄື່ອງປ່າຂອງດົງ.

ການສຳຫຼວດທີ່ດິນປ່າໄມ້ ດຳເນີນຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ເກັບກຳຂໍ້ມູນ, ຕີລາຄາສະພາບທີ່ດິນປ່າໄມ້ ແລະ ການປ່ຽນແປງ ປະເພດການນຳໃຊ້ທີ່ດິນປ່າໄມ້;
2. ເກັບກຳຂໍ້ມູນ ການນຳໃຊ້ທີ່ດິນປ່າໄມ້;
3. ກຳນົດເຂດ ແລະ ວາງແຜນການນຳໃຊ້ທີ່ດິນປ່າໄມ້;
4. ຫຼັກການອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບອົງການທີ່ກ່ຽວຂ້ອງໃນການສຳຫຼວດທີ່ດິນປ່າໄມ້ ເພື່ອວາງແຜນຈັດສັນ, ການຄຸ້ມຄອງ, ປົກປັກຮັກສາ, ແຜນພັດທະນາ ແລະ ນຳໃຊ້ ແບບຍືນຍົງ.

ມາດຕາ 9 ທີ່ຕັ້ງ, ຂອບເຂດຂອງ ແຕ່ລະປະເພດປ່າ

ຂອບເຂດປະເພດປ່າໄມ້ ພາຍໃນແຂວງຈຳປາສັກ ໄດ້ກຳນົດໄວ້ດັ່ງນີ້:

1. ປ່າສະຫງວນແຫ່ງຊາດ 3 ແຫ່ງ = 342.011 ເຮັກຕາ (ຕາມດຳລັດເລກທີ 164/ນຍ,ລົງວັນທີ29/10/1993)

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ພູຊຽງທອງ | 34.821 | ຊະນະສົມບູນ | 105°66'30"<br>105°65'32"<br>105°78'60"<br>105°46'72" | 15°45'80"<br>15°31'59"<br>15°39'61"<br>15°34'69" | ຊາຍແດນແຂວງສາລະວັນ<br>ບ້ານສີທອນ<br>ບ້ານນາໃນ<br>ບ້ານສຸລະ |
| 2 | ດົງຫົວສາວ | 93.978 | ບາຈຽງ,<br>ປາກຊ່ອງ<br>ປະທຸມພອນ | 106°13'00"<br>106°16'89"<br>106°29'64"<br>105°92'75 | 15°18'05"<br>14°80'81"<br>14°98'30"<br>15°00'35" | ບ້ານໜອງນ້ຳຂາວ<br>ບ້ານກະລະ<br>ສາຍເຊຄຳພໍ<br>ບ້ານຫຼັກ 34 |
| 3 | ເຊປຽນ | 213.212 | ປະທຸມພອນ<br>ໂຂງ | 106°02'12"<br>106°07'86"<br>106°35'74"<br>105°90'30" | 14°78'72"<br>14°02'85"<br>14°47'48"<br>14°58'51" | ບ້ານຫລັກ 48<br>ບ້ານໂສດ<br>ບ້ານຕະອອງ<br>ບ້ານຫ້ວຍໃຜ່ |

2. ປ່າສະຫງວນຂອງແຂວງ 9 ແຫ່ງ = 72.110 ເຮັກຕາ

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ພູບາຈຽງ | 3.015 | ປາກເຊ,<br>ບາຈຽງ | 105°83'51"<br>105°86'87"<br>105°88'29"<br>105°82'36" | 15°18'45"<br>15°11'86"<br>15°15'38"<br>15°15'38" | ບ້ານນາຈຽງ<br>ບ້ານໄຊສະຫວ່າງ<br>ບ້ານທົ່ງອຸດົມ<br>ບ້ານນາແຫກ |
| 2 | ພູຜາເຜດ | 2.303 | ໂພນທອງ | 105°59'28"<br>105°60'18"<br>105°63'48"<br>105°57'55" | 15°33'08"<br>15°27'31"<br>15°28'62"<br>15°32'29" | ຊາຍແດນລາວ-ໄທ<br>ບ້ານສະຫວ່າງ<br>ບ້ານແກ້ງຍາງ<br>ຊາຍແດນລາວ-ໄທ |
| 3 | ພູສ່າເຫລົ້າ | 551 | ໂພນທອງ | 105°81'33"<br>105°81'76"<br>105°82'21"<br>105°79'44" | 15°28'06"<br>15°26'00"<br>15°09'23"<br>15°08'33" | ບ້ານຄັນແຍງ<br>ບ້ານສ່າເຫລົ້າ<br>ສາຍນ້ຳຂອງ<br>ບ້ານນາຫວ້າ |
| 4 | ພູເຈາະ | 991 | ໂພນທອງ,<br>ຈຳປາສັກ | 105°69'91"<br>105°71'03" | 14°95'39"<br>14°91'05" | ບ້ານທ່າ<br>ບ້ານໜອງແຕ້ |

| | | | | | | |
|---|---|---|---|---|---|---|
| | | | | 105°71'42"<br>105°68'34" | 14°93'75"<br>14°94'84" | ບ້ານໂນນສະອາດ<br>ບ້ານໂນນດີ |
| 5 | ພູເກົ້າ-ມະໂລງ | 22.417 | ໂພນທອງ, ຈຳປາສັກ | 105°81'90"<br>105°76'43"<br>105°87'60"<br>105°72'00" | 15°05'50"<br>14°83'36"<br>14°95'90"<br>14°99'85" | ບ້ານນາຫວ້າ<br>ບ້ານໂນນທາຍ<br>ບ້ານຄັນແຍງ<br>ບ້ານອ່າງຄຳ |
| 6 | ພູສັງຄີ | 570 | ຈຳປາສັກ, ສຸຂຸມາ | 105 ° 75'70<br>105 ° 76'30<br>105 ° 75'79<br>105 ° 73'49 | 14 ° 82'32<br>14 ° 81'47<br>14 ° 79'77<br>14 ° 80'10 | ບ້ານໂນນທາຍ<br>ບ້ານນາສະຫວ່າງ<br>ບ້ານດອນຂັ້ນເທິງ<br>ບ້ານຄຳຈະເລີນ |
| 7 | ໜອງມອບ ໝື່ນວັງ-ດົງຄັນທຸງ | 39.369 | ສຸຂຸມາ, ມຸນລະປາໂມກ | 105°69'13"<br>105°54'67"<br>105°74'58"<br>105°60'25 | 14°70'88"<br>14°16'47"<br>14°57'95"<br>14°25'93" | ບ້ານປາກຊ້າງ<br>ບ້ານໂພນດູ່<br>ບ້ານຫ້ວຍໃຜ່<br>ບ້ານໂຄກກ່ອງ+ບ້ານແຊ |
| 8 | ດົງສຽດ | 656 | ສຸຂຸມາ, ມຸນລະປາໂມກ | 105°76'91"<br>105°80'67"<br>105°76'40"<br>105°78'70" | 14°51'95"<br>14°49'85"<br>14°49'06"<br>14°48'04" | ບ້ານໂນນເອື້ອງ<br>ບ້ານທ່ານ້ອງ<br>ບ້ານທ່ານ້ອງ<br>ບ້ານໂນນເອື້ອງ |
| 9 | ພູໂຂງ | 2.238 | ໂຂງ | 105°81'68"<br>105°84'79"<br>105°85'08"<br>105°79'34" | 14°17'05"<br>14°12'43"<br>14°14'82"<br>14°13'43" | ບ້ານ ຫົວໂຂງ<br>ບ້ານກາງໂຂງ<br>ບ້ານເວີນທອງ<br>ບ້ານແສນຮາດໃຫຍ່ |

**3. ປ່າສະຫງວນຂອງເມືອງ 21 ແຫ່ງ = 44.159 ເຮັກຕາ**

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ບ້ານນາຈຽງ | 30 | ປາກເຊ | 105°81'65"<br>105°80'78"<br>105°81'77"<br>105°80'25" | 15°17'86"<br>15°16'50"<br>15°17'80"<br>15°16'99" | ບ້ານຊຶ້ງ<br>ບ້ານນາຈຽງ<br>ບ້ານນາຈຽງ<br>ບ້ານນາຈຽງ |
| 2 | ດົງກະໂລງ | 20 | ປາກເຊ | 105°76'50"<br>105°76'72"<br>105°76'55"<br>105°76'93" | 15°16'96"<br>15°16'19"<br>15°16'33"<br>15°16'30 | ບ້ານດົງກະໂລງ<br>ບ້ານດົງກະໂລງ<br>ບ້ານດົງກະໂລງ<br>ບ້ານດົງກະໂລງ |
| 3 | ຕີນພູກາງເຮືອນ | 2.688 | ຊະນະສົມບູນ | 105°74'20" | 15°45'73" | ຊາຍແດນແຂວງສາລະວັນ |

| | | | | | | |
|---|---|---|---|---|---|---|
| | | | | 105°77’41”<br>105°73’25”<br>105°59’76” | 14°55’46”<br>15°30’16”<br>15°33’66” | ບ້ານສີທອນ<br>ບ້ານນາໄນ<br>ປ່າສະຫງວນພູຊຽງທອງ |
| 4 | ໜອງດູ່ | 100 | ຊະນະສົມບູນ | 105°81’60”<br>105°82’19”<br>105°81’35”<br>105°81’11” | 15°39’11”<br>15°38’63”<br>15°37’82”<br>15°38’38” | ບ້ານນາໃນ<br>ບ້ານໜອງດູ່<br>ບ້ານໜອງດູ່<br>ບ້ານໜອງດູ່ |
| 5 | ຄຳແປງ | 306 | ຊະນະສົມບູນ | 105°81’35”<br>105°81’55”<br>105°78’49”<br>105°78’15” | 15°35’90”<br>15°35’32”<br>15°36’44”<br>15°34’28” | ບ້ານຄຳແປງ<br>ບ້ານລຸຍ<br>ບ້ານຄຳແປງ<br>ບ້ານຄຳແປງ |
| 6 | ໜອງເມັກ | 278 | ຊະນະສົມບູນ | 105°78’08”<br>105°78’76”<br>105°75’59”<br>105°75’49” | 15°35’23”<br>15°34’92”<br>15°31’85”<br>15°32’47” | ບ້ານນາງາມ<br>ບ້ານໜອງເມັກ<br>ບ້ານໜອງເມັກ<br>ບ້ານໜອງແຄນ |
| 7 | ດອນແຊ | 285 | ຊະນະສົມບູນ | 105°82’99”<br>105°83’36”<br>105°82’45”<br>105°81’85” | 15°35’53”<br>15°31’19”<br>15°33’89”<br>15°30’82” | ບ້ານດອນແຊ<br>ເຊໂດນ<br>ບ້ານດອນແຊ<br>ບ້ານດອນແຊ |
| 8 | ຜາສ້ອມ | 123 | ບາຈຽງ | 105°92’22”<br>105°92’99”<br>105°91’62”<br>105°92’20” | 15°28’50”<br>15°27’54”<br>15°27’72”<br>15°27’38” | ບ້ານແກ້ງຕື້ນ<br>ບ້ານແກ້ງຕື້ນ<br>ບ້ານໝາກແງວ<br>ບ້ານໜອງກົ້ງ |
| 9 | ຫ້ວຍກອງ | 1.162 | ປາກຊ່ອງ | 106°40’84”<br>106°44’05”<br>106°39’29”<br>106°42’65” | 15°15’80”<br>15°13’22”<br>15°14’81”<br>15°12’66” | ບ້ານຫ້ວຍກອງ<br>ບ້ານຫ້ວຍກອງ<br>ບ້ານຫ້ວຍກອງ<br>ບ້ານຫ້ວຍກອງ |
| 10 | ດົງມະນາດ | 2.686 | ປາກຊ່ອງ | 106°34’77”<br>106°36’56”<br>106°29’20”<br>106°31’32” | 15°39’44”<br>15°38’07”<br>15°37’50”<br>15°33’20” | ຊາຍແດນແຂວງສາລະວັນ<br>ບ້ານເສັດຄິດ<br>ບ້ານໜອງສູງ<br>ບ້ານເສັດຄິດ |
| 11 | ຕົນພູໄຊ່ | 242 | ໂພນທອງ | 105°70’19”<br>105°70’78”<br>105°67’71”<br>105°68’36” | 15°06’95”<br>14°95’60”<br>14°95’52”<br>14°94’98” | ບ້ານໂນນພະເຈົ້າ<br>ບ້ານໂນນດີ<br>ບ້ານໂນນດີ<br>ບ້ານໂນນພະເຈົ້າ |

| | | | | | | |
|---|---|---|---|---|---|---|
| 12 | ບ້ານທາດ-ປ່າກໍ່ | 1.094 | ສຸຂຸມາ | 105°76'14"<br>105°79'33"<br>105°75'18"<br>105°76'62" | 14°70'78"<br>14°69'84"<br>14°68'51"<br>14°67'61" | ບ້ານທາດ<br>ບ້ານປ່າກໍ<br>ບ້ານບາກ<br>ບ້ານປ່າກໍ |
| 13 | ໂນນພະເຈົ້າ-ດອນກອງ | 703 | ສຸຂຸມາ | 105°75'57"<br>105°73'47"<br>105°70'07"<br>105°72'88" | 14°74'29"<br>14°71'72"<br>14°73'97"<br>14°70'76" | ບ້ານໂນນພະເຈົ້າ<br>ບ້ານດອນກອງ<br>ບ້ານດອນທວາຍ<br>ບ້ານດອນກອງ |
| 14 | ບ້ານຫຽງ-ຫ້ວຍປາອາວ | 13.852 | ສຸຂຸມາ | 105°54'62"<br>105°60'06"<br>105°53'79"<br>105°53'21" | 14°71'44"<br>14°61'08"<br>14°59'78"<br>14°46'50" | ບ້ານຫຽງ<br>ຊາຍແດນເມືອງມຸນ<br>ບ້ານຫ້ວຍເຜີ້ງ<br>ປ່າປ້ອງກັນຊາຍແດນ |
| 15 | ໂນນແດງເໜືອ | 4.357 | ສຸຂຸມາ | 105°57'34"<br>105°61'51"<br>105°53'52"<br>105°57'34" | 14°79'21"<br>14°75'43"<br>14°75'21"<br>14°79'21" | ບ້ານໂນນແດງເໜືອ<br>ບ້ານຫຽງ<br>ບ້ານໂນນແດງເໜືອ<br>ປ່າປ້ອງກັນຊາຍແດນ |
| 16 | ຫົວໂຂງ | 683 | ໂຂງ | 105°83'67"<br>105°83'66"<br>105°80'98"<br>105°82'44" | 14°22'24"<br>14°18'50"<br>14°18'65"<br>14°17'75" | ບ້ານໂຂງແຫລມ<br>ເສັ້ນທາງຫົວໂຂງ<br>ບ້ານແສນຫລ່າມ<br>ບ້ານໂຂງຫາດງິ້ວ |
| 17 | ຫ້ວຍໄຮ-ນາແສນພັນ | 771 | ໂຂງ | 105°90'47"<br>105°91'77"<br>105°87'79"<br>105°90'74" | 14°26'27"<br>14°24'73"<br>14°30'95"<br>14°25'34" | ບ້ານເຕົາປູງ<br>ບ້ານນາແສນພັນ<br>ບ້ານນາແສນພັນ<br>ບ້ານຫ້ວຍໄຮ |
| 18 | ຕີນພູຊຽງອິນ | 1.869 | ໂຂງ | 105°90'15"<br>105°91'41"<br>105°88'98"<br>105°90'19" | 14°47'39"<br>14°42'54"<br>14°44'19"<br>14°38'81" | ຊາຍແດນມ.ປະທຸມພອນ<br>ບ້ານທ່າໂພ<br>ປ່າສະຫງວນເຊປຽນ<br>ບ້ານອຸປະຊາ |
| 19 | ຫ້ວຍເລືອດຄວາຍ | 946 | ໂຂງ | 105°89'47"<br>105°91'17"<br>105°91'05"<br>105°91'23" | 14°37'99"<br>14°36'25"<br>14°33'94"<br>14°34'05" | ບ້ານທ່າໂພ<br>ບ້ານຈານ<br>ບ້ານທ່າໂພ<br>ບ້ານທ່າໂພ |
| 20 | ດົງເອີນ | 1.051 | ໂຂງ | 105°89'13"<br>105°91'40" | 14°33'05"<br>14°31'76" | ບ້ານຈານ<br>ບ້ານກົກປາແດກ |

| | | | | | | |
|---|---|---|---|---|---|---|
| | | | | 105°87'79"<br>105°90'75" | 14°30'95"<br>14°28'05" | ບ້ານຈານ<br>ສາຍນ້ຳຂອງ |
| 21 | ກຸ່ມກະດັນ | 10.913 | ໂຂງ | 106°01'28"<br>106°11'79"<br>105°95'98"<br>106°01'12" | 14°05'76"<br>14°03'44"<br>14°01'39"<br>13°92'93" | ບ້ານນາສີງເປືອຍ<br>ບ້ານບຶງງາມ<br>ປ່າປ້ອງກັນຊາຍແດນ<br>ບ້ານເສັດເຕົ່າເຫລັກ |

4. ປ່າສະຫງວນຂອງບ້ານ 27 ແຫ່ງ = **10.875** ເຮັກຕາ

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ບ້ານຫລັກ 12 | 31 | ປາກຊ່ອງ | 106°36'92"<br>106°37'34"<br>106°36'68"<br>106°37'13" | 15°21'85"<br>15°21'45"<br>15°21'43"<br>15°21'13" | ບ້ານຫລັກ 12<br>ບ້ານຫລັກ 12<br>ບ້ານຫລັກ 12<br>ບ້ານຫລັກ 12 |
| 2 | ບ້ານໜອງ ເຊືອງໃຫຍ່ | 64 | ປາກຊ່ອງ | 106°36'92"<br>106°37'34"<br>106°36'68"<br>106°37'13" | 15°21'85"<br>15°21'45"<br>15°21'43"<br>15°21'13" | ບ້ານໜອງເຊືອງໃຫຍ່<br>ບ້ານໜອງເຊືອງໃຫຍ່<br>ບ້ານໜອງເຊືອງໃຫຍ່<br>ບ້ານໜອງເຊືອງໃຫຍ່ |
| 3 | ໂນນກະຖາດ | 45 | ປາກຊ່ອງ | 106°27'47"<br>106°28'03"<br>106°27'00"<br>106°27'85" | 15°15'96"<br>15°15'56"<br>15°15'70"<br>15°15'33" | ບ້ານທົ່ງກະຕ່າຍ<br>ບ້ານທົ່ງກະຕ່າຍ<br>ບ້ານທົ່ງກະຕ່າຍ<br>ບ້ານທົ່ງກະຕ່າຍ |
| 4 | ບ້ານນາບອນ (1 ) | 518 | ປະທຸມພອນ | 105°99'50"<br>106°00'84"<br>105°98'83"<br>105°98'77" | 14°89'11"<br>14°87'93"<br>14°87'48"<br>14°85'78" | ບ້ານນາບອນ<br>ບ້ານນາບອນ<br>ບ້ານນາບອນ<br>ບ້ານນາບອນ |
| 5 | ບ້ານນາບອນ (2) | 46 | ປະທຸມພອນ | 106°02'15"<br>106°02'63"<br>106°01'93"<br>106°02'59" | 14°88'30"<br>14°87'85"<br>14°87'88"<br>14°87'39" | ບ້ານນາບອນ<br>ບ້ານນາບອນ<br>ບ້ານນາບອນ<br>ບ້ານນາບອນ |
| 6 | ບ້ານເລົ່າຫຍ້າ | 816 | ປະທຸມພອນ | 106°09'34"<br>106°10'09"<br>106°05'48"<br>106°02'59" | 14°90'37"<br>14°88'05"<br>14°88'00"<br>14°87'39" | ບ້ານເລົ່າຫຍ້າ<br>ບ້ານເລົ່າຫຍ້າ<br>ບ້ານເລົ່າຫຍ້າ<br>ບ້ານເລົ່າຫຍ້າ |
| 7 | ບ້ານກາລະ | 851 | ປະທຸມພອນ | 106°12'32" | 14°90'34" | ບ້ານກາລະ |



ໂ

| | | | | | | |
|---|---|---|---|---|---|---|
| | | | | 106°18'40" | 14°80'77" | ບ້ານກາລະ |
| | | | | 106°11'57" | 14°81'06" | ບ້ານກາລະ |
| | | | | 106°12'53" | 14°80'22" | ບ້ານກາລະ |
| 8 | ບ້ານທາງແບ່ງ ຫລັກ 48 | 528 | ປະທຸມພອນ | 106°01'62" | 14°79'07" | ບ້ານທາງແບ່ງຫລັກ 48 |
| | | | | 106°02'29" | 14°78'62" | ບ້ານທາງແບ່ງຫລັກ 48 |
| | | | | 105°96'92" | 14°77'95" | ບ້ານທາງແບ່ງຫລັກ 48 |
| | | | | 105°98'89" | 14°76'72" | ບ້ານທາງແບ່ງຫລັກ 48 |
| 9 | ບ້ານນາໂພ | 789 | ປະທຸມພອນ | 105°96'93" | 14°76'64" | ບ້ານນາໂພ |
| | | | | 105°97'64" | 14°73'95" | ບ້ານນາໂພ |
| | | | | 105°96'23" | 14°73'18" | ບ້ານນາໂພ |
| | | | | 105°94'49" | 14°70'36" | ບ້ານນາໂພ |
| 10 | ບ້ານທ່າ | 355 | ໂພນທອງ | 105°76'74" | 14°99'13" | ບ້ານທ່າໃຫຍ່ |
| | | | | 105°77'04" | 14°98'94" | ບ້ານທ່າໃຫຍ່ |
| | | | | 105°71'94" | 14°96'64" | ບ້ານທ່າໃຫຍ່ |
| | | | | 105°72'38" | 14°95'36" | ບ້ານທ່າໃຫຍ່ |
| 11 | ບ້ານຈີກ | 88 | ໂພນທອງ | 105°66'99" | 14°98'18" | ບ້ານຈີກ |
| | | | | 105°67'13" | 15°16'13" | ບ້ານຈີກ |
| | | | | 105°65'28" | 15°15'44" | ບ້ານຈີກ |
| | | | | 105°65'37" | 15°15'31" | ບ້ານຈີກ |
| 12 | ດົງໝາໃບ | 650 | ສຸຂຸມາ | 105°80'76" | 14°54'62" | ບ້ານອຸທຸມພອນ |
| | | | | 105°81'68" | 14°54'95" | ບ້ານອຸທຸມພອນ |
| | | | | 105°77'77" | 14°53'47" | ບ້ານອຸທຸມພອນ |
| | | | | 105°78'54" | 14°51'78" | ບ້ານໂນນແດງໃຕ້ |
| 13 | ຍອດຫ້ວຍ ທ່ານ້ອງ | 682 | ສຸຂຸມາ | 105°76'53" | 14°51'03" | ບ້ານໂນນເອື້ອງ |
| | | | | 105°77'63" | 14°48'87" | ຊາຍແດນເມືອງມູນ |
| | | | | 105°74'05" | 14°48'84" | ບ້ານໂນນເອື້ອງ |
| | | | | 105°75'24" | 14°48'19" | ບ້ານໂນນເອື້ອງ |
| 14 | ດົງບ້ານເອີນ | 212 | ມູນລະ ປາໂມກ | 105°83'20" | 14°47'95" | ບ້ານເອີນ |
| | | | | 105°84'30" | 14°46'11" | ບ້ານເອີນ |
| | | | | 105°82'96" | 14°46'63" | ບ້ານເອີນ |
| | | | | 105°83'51" | 14°45'38" | ບ້ານເອີນ |

| | | | | | | |
|---|---|---|---|---|---|---|
| 15 | ດົງໝາກໄຟ | 125 | ມຸນລະປາໂມກ | 105°81'03" | 14°28'88" | ບ້ານສະພັງ |
| | | | | 105°83'00" | 14°28'11" | ບ້ານສະພັງ |
| | | | | 105°80'47" | 14°28'56" | ບ້ານສະພັງ |
| | | | | 105°82'79" | 14°27'81" | ບ້ານສະພັງ |
| 16 | ດົງເຄັງ-ດົງຍາງ | 1.379 | ມຸນລະປາໂມກ | 105°77'51" | 14°34'37" | ບ້ານໜອງບົວທອງ |
| | | | | 105°80'93" | 14°31'80" | ບ້ານສະພັງ |
| | | | | 105°76'00" | 14°32'25" | ບ້ານສະພັງ |
| | | | | 105°80'11" | 14°28'57" | ບ້ານໜອງບົວທອງ |
| 17 | ດົງບ້ານຫ້ວຍຍາງ | 473 | ມຸນລະປາໂມກ | 105°77'92" | 14°22'44" | ບ້ານຫ້ວຍຍາງ |
| | | | | 105°79'04" | 14°20'50" | ບ້ານຫ້ວຍຍາງ |
| | | | | 105°76'56" | 14°21'38" | ບ້ານຫ້ວຍຍາງ |
| | | | | 105°78'01" | 14°19'98" | ບ້ານຫ້ວຍຍາງ |
| 18 | ໂພນດູ່ | 118 | ມຸນລະປາໂມກ | 105°72'11" | 14°18'05" | ບ້ານໂພນດູ່ |
| | | | | 105°72'43" | 14°17'61" | ບ້ານໂພນດູ່ |
| | | | | 105°71'42" | 14°17'51" | ບ້ານໂພນດູ່ |
| | | | | 105°71'43" | 14°16'78" | ບ້ານໂພນດູ່ |
| 19 | ທ່າໂພ | 248 | ໂຂງ | 105°89'21" | 14°39'76" | ບ້ານທໍ່ເຂົ້າ |
| | | | | 105°89'90" | 14°38'87" | ບ້ານທ່າໂພ |
| | | | | 105°87'34" | 14°38'64" | ບ້ານທ່າໂພ |
| | | | | 105°88'16" | 14°38'30" | ບ້ານທ່າໂພ |
| 20 | ນາລານ | 763 | ໂຂງ | 105°86'94" | 14°22'79" | ບ້ານນາລານ |
| | | | | 105°87'87" | 14°20'94" | ບ້ານສີງເປືອຍ |
| | | | | 105°84'62" | 14°19'87" | ບ້ານສີງເປືອຍ |
| | | | | 105°85'76" | 14°19'29" | ບ້ານນາລານ |
| 21 | ບ້ານສີງຍາງ | 461 | ໂຂງ | 105°86'50" | 14°19'39" | ບ້ານສີງເປືອຍ |
| | | | | 105°78'78" | 14°20'94" | ບ້ານບ້ານຫ້ວຍໃຜ່ |
| | | | | 105°85'45" | 14°26'13" | ບ້ານບ້ານຫ້ວຍໃຜ່ |
| | | | | 105°88'07" | 14°17'58" | ບ້ານສີງເປືອຍ |
| 22 | ບ້ານໂພນວິໄຊ | 395 | ໂຂງ | 105°94'54" | 14°18'32" | ບ້ານນາເຊືອກ |
| | | | | 105°94'93" | 14°17'39" | ບ້ານນາໜອງແຄນ |
| | | | | 105°92'43" | 14°16'18" | ບ້ານໂພນວິໄຊ |
| | | | | 105°95'14" | 14°15'80" | ບ້ານນາເຊືອກ |
| 23 | ພູມ່ວງ | 127 | ໂຂງ | 105°88'69" | 14°13'13" | ບ້ານສາມຄ້າງ |
| | | | | 105°89'34" | 14°12'34" | ບ້ານຫາດຊາຍຄູນ |
| | | | | 105°88'66" | 14°13'10" | ບ້ານຫາດຊາຍຄູນ |

| | | | | | | |
|---|---|---|---|---|---|---|
| | | | | 105°88'99" | 14°12'09" | ບ້ານຫາດຊາຍຄູນ |
| 24 | ພູໂຄ້ງ | 29 | ໂຂງ | 105°90'04"<br>105°90'38"<br>105°89'74"<br>105°89'94" | 14°13'13"<br>14°12'97"<br>14°12'74"<br>14°12'57" | ບ້ານຫາດຊາຍຄູນ<br>ບ້ານຫາດຊາຍຄູນ<br>ບ້ານຫາດຊາຍຄູນ<br>ບ້ານຫາດຊາຍຄູນ |
| 25 | ດອນພະເພັງ | 249 | ໂຂງ | 105°97'15"<br>105°98'57"<br>105°97'32"<br>105°97'80" | 13°97'00"<br>13°94'97"<br>13°95'09"<br>13°94'32" | ບ້ານດອນພະເພັງ<br>ບ້ານດອນພະເພັງ<br>ບ້ານດອນພະເພັງ<br>ບ້ານດອນພະເພັງ |
| 26 | ທາງຄອນ | 650 | ໂຂງ | 105°94'77"<br>105°95'16"<br>105°91'46"<br>105°93'38" | 13°95'93"<br>13°93'92"<br>13°95'01"<br>13°93'60" | ບ້ານທາງຄອນ<br>ບ້ານທາງຄອນ<br>ບ້ານທາງຄອນ<br>ບ້ານທາງຄອນ |
| 27 | ດອນສະນຽດ | 183 | ໂຂງ | 105°90'47"<br>105°91'32"<br>105°89'95"<br>105°91'55" | 13°94'86"<br>13°94'42"<br>13°94'40"<br>13°93'40" | ບ້ານທາງຄອນ<br>ບ້ານທາງຄອນ<br>ບ້ານທາງຄອນ<br>ບ້ານທາງຄອນ |

5. ປ່າປ້ອງກັນ 06 ແຫ່ງ = 194.503 ເຮັກຕາ (ກໍາລັງສະເໜີເປັນປ່າປ້ອງກັນແຫ່ງຊາດ)

| ລ/ດ | ຊື່ປ່າ ປ້ອງກັນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ຍອດນໍ້າ ຫ້ວຍເຫາະ | 39.692 | ປາກຊ່ອງ | 106°33'10"<br>106°46'50"<br>105°15'20"<br>106°32'25" | 15°09'392"<br>14 °09'54"<br>15°03'23"<br>15 °06'23" | ຊາຍແດນແຂວງອັດຕະປື<br>ຊາຍແດນແຂວງອັດຕະປື<br>ຊາຍແດນແຂວງອັດຕະປື<br>ບ້ານນໍ້າຕາງ |
| 2 | ຍອດນໍ້າ ເຊເສັດ | 5.259 | ປາກຊ່ອງ | 106°13'14"<br>106°14'22"<br>106°15'09"<br>106°12'13" | 15 °20'11"<br>15 °15'29"<br>15 °17'33"<br>15 °18'49" | ຊາຍແດນແຂວງສາລະວັນ<br>ບ້ານຫ້ວຍຫວາຍ<br>ບ້ານເສັດຄົດ<br>ບ້ານກະເພີ |
| 3 | ຍອດນໍ້າ ເຊກະຕາມ | 24.198 | ປາກຊ່ອງ | 106°29'56"<br>106°29'56"<br>106°36'27"<br>106°41'28" | 15 °16'23"<br>15 °06'33"<br>15 °13'04"<br>15 °14'17" | ປ່າປ້ອງກັນຫ້ວຍລໍາພັນ<br>ຊາຍແດນແຂວງອັດຕະປື<br>ຊາຍແດນແຂວງອັດຕະປື<br>ບ້ານນໍ້າຫານ |
| 4 | ຊາຍແດນ ລາວ-ໄທ | 27.830 | ໂພນທອງ, ຈໍາປາສັກ, ສຸຂຸມາ ແລະ | 105°33'32"<br>105°28'24"<br>105°38'53" | 15 °19'36"<br>14 °28'24"<br>14 °58'34" | ປ່າສະຫງວນພູຜາເຜດ<br>ປ່າປ້ອງກັນເຊລໍາເພົາ<br>ບ້ານຫຽງ |

| | | | | | | |
|---|---|---|---|---|---|---|
| | | | ມຸນລະປະໂມກ | 105°30'39" | 14 °48'04" | ຊາຍແດນລາວ-ໄທ |
| 5 | ຍອດນ້ຳເຊລຳເຝົາ | 89.311 | ມູນລະປາໂມກ | 105°31'38"<br>105°21,41"<br>105°41'44"<br>105°12'17" | 14 °27'38"<br>14 °06'20"<br>14 °09'40"<br>14 °20'37" | ປ່າປ້ອງກັນຊາຍແດນ<br>ສາຍເຊລຳເຝົາ<br>ປ່າຜະລິດໜອງຕາໂຫງກ<br>ຊາຍແດນລາວ-ໄທ |
| 6 | ຫ້ວຍເສັດ-ຫ້ວຍໂສດ | 8.213 | ໂຂງ | 106°08'46"<br>106°03'21"<br>106°10'07"<br>106°01'45" | 14 °01'52"<br>13 °55'12"<br>14 °01'28"<br>13 °56'41" | ບ້ານນາສີງເປືອຍ<br>ບ້ານບຶງງາມ<br>ຊາຍແດນລາວ-ກຳປູເຈຍ<br>ບ້ານບຶງງາມ |

**6.** ປ່າປ້ອງກັນຂອງແຂວງ 05 ແຫ່ງ = 187.529 ເຮັກຕາ

| ລ/ດ | ຊື່ປ່າປ້ອງກັນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ຍອດນ້ຳເຊນ້ຳນ້ອຍ | 67.666 | ປາກຊ່ອງ | 106°35'58"<br>106°36'14"<br>106°45'53"<br>106°28'05" | 15 °03'29"<br>14 °45'36"<br>14 °54'23"<br>14 °54'23" | ບ້ານຫ້ວຍຈອດ<br>ຊາຍແດນແຂວງອັດຕະປື<br>ຊາຍແດນແຂວງອັດຕະປື<br>ຊາຍແດນແຂວງອັດຕະປື |
| 2 | ຍອດນ້ຳເຊປຽນ | 45.782 | ປາກຊ່ອງ | 106°16'29"<br>106°46'53"<br>106°34'47"<br>106°12'27" | 15 °08'00"<br>14 °56'42"<br>15 °02'19"<br>15 °06'15" | ບ້ານທົ່ງກະຕ່າຍ<br>ຊາຍແດນແຂວງອັດຕະປື<br>ປ່າສະຫງວນດົງຫົວສາວ<br>ປ່າປ້ອງກັນເຊນ້ຳນ້ອຍ |
| 3 | ຍອດນ້ຳຫ້ວຍຈຳປີ-ບັງລຽງ | 47.338 | ບາຈຽງ, ປາກຊ່ອງ | 106°03'22"<br>106°12'28"<br>106°14'37"<br>105°58'12" | 15 °22'41"<br>15 °06'16"<br>15 °11'51"<br>15 °12'37" | ບ້ານລາດບົກ<br>ປ່າປ້ອງກັນເຊປຽນ<br>ປ່າປ້ອງກັນເຊເສັດ<br>ປ່າສະຫງວນດົງຫົວສາວ |
| 4 | ຍອດນ້ຳຫ້ວຍລຳພັນ | 17.335 | ປາກຊ່ອງ | 106°25'12"<br>106°30"40"<br>106°25'12"<br>106°22'57" | 15 °21'40"<br>15 °15'37"<br>15 °17'59"<br>15 °19'22" | ບ້ານໜອງກັນ<br>ປ່າປ້ອງກັນເຊກະຕາມ<br>ຊາຍແດນແຂວງເຊກອງ<br>ບ້ານທົ່ງກາຫລົງ |
| 5 | ລຳຫ້ວຍຂະໜວນ | 9.408 | ໂພນທອງ, ຈຳປາສັກ, ສຸຂຸມາ | 105°77'55"<br>105°83'01"<br>105°67'66"<br>105°73'91" | 15°02'16"<br>14°98'31"<br>14°79'20"<br>14°74'13" | ບ້ານປຸ່ງແກ<br>ບ້ານດອນກອງ<br>ປ່າສະຫງວນພູເກົ້າ-ມະໂລງ<br>ບ້ານໜອງແຕ້ |

7. ປ່າປ້ອງກັນຂອງເມືອງ26ແຫ່ງ = 88.828 ເຮັກຕາ

| ລ/ດ | ຊື່ປ່າ ປ້ອງກັນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ໝາຍເຫດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນ ຂະໜານ | |
| 1 | ຫ້ວຍຕຸ່ມແລງ | 109 | ຊະນະສົມບູນ | 105°83'25" | 15°41'95" | ບ້ານນາຫົວພູ |
| | | | | 105°83'76" | 15°40'58" | ບ້ານຄຳຢາດ |
| | | | | 105°83'64" | 15°40'12" | ປ່າຜະລິດສາລີວັງເວີນ |
| | | | | 105°82'79" | 15°41'84" | ບ້ານຄຳຢາດ |
| 2 | ຫ້ວຍບັງລຽງ | 1.632 | ປາກຊ່ອງ | 106°08'00" | 15°17'55" | ປ່າປ້ອງກັນຈຳປີ-ບັງລຽງ |
| | | | | 106°09'72" | 15°17'26" | ປ່າສະຫງວນດົງຫົວສາວ |
| | | | | 106°01'51" | 15°15'69" | ປ່າສະຫງວນດົງຫົວສາວ |
| | | | | 106°03'64" | 15°14'35" | ຊາຍແດນເມືອງບາຈຽງ |
| 3 | ພູໝາກຈັບ | 3.356 | ປາກຊ່ອງ | 106°34'48" | 15°27'98" | ບ້ານກົງຕຸ່ມ |
| | | | | 106°36'79" | 15°22'21" | ບ້ານຫລັກ 11 |
| | | | | 106°30'38" | 15°22'98" | ບ້ານ ກົງຕຸ່ມ |
| | | | | 106°33'67" | 15°20'62" | ບ້ານກະຕອດ |
| 4 | ຫ້ວຍເສັດ-ຫ້ວຍຫວາຍ | 3.736 | ປາກຊ່ອງ | 106°28'42" | 15°37'11" | ຊາຍແດນແຂວງສາລະວັນ |
| | | | | 106°30'82" | 15°31'44" | ບ້ານຫ້ວຍຫວາຍ |
| | | | | 106°24'41" | 15°34'91" | ບ້ານເສັດຄຶດ |
| | | | | 106°25'38" | 15°28'19" | ປ່າປ້ອງກັນເຊເສັດ |
| 5 | ລຳຫ້ວຍກົກນ້ອຍ | 317 | ປາກຊ່ອງ | 106°27'78" | 15°29'46" | ບ້ານກົງຕຸ່ມ |
| | | | | 106°29'38" | 15°28'20" | ບ້ານກົງຕຸ່ມ |
| | | | | 106°27'32" | 15°28'97" | ບ້ານກົງຕຸ່ມ |
| | | | | 106°28'96" | 15°27'09" | ບ້ານກົງຕຸ່ມ |
| 6 | ລຳຫ້ວຍກົກໃຫຍ່ | 549 | ປາກຊ່ອງ | 106°28'37" | 15°25'53" | ບ້ານໜອງກະລີ |
| | | | | 106°28'36" | 15°23'75" | ບ້ານໜອງແລະ |
| | | | | 106°24'82" | 15°23'19" | ບ້ານທົ່ງເສັດ |
| | | | | 106°25'78" | 15°22'70" | ບ້ານໜອງກະລີ |
| 7 | ພູໄຟໃໝ້ | 802 | ປາກຊ່ອງ | 106°37'73" | 15°32'78" | ປ່າປ້ອງກັນຫ້ວຍລຳພັນ |
| | | | | 106°40'09" | 15°28'89" | ປ່າປ້ອງກັນຫ້ວຍລຳພັນ |
| | | | | 106°38'07" | 15°29'17" | ປ່າປ້ອງກັນຫ້ວຍລຳພັນ |
| | | | | 106°39'06" | 15°25'64" | ບ້ານກົງຕຸ່ມ |
| 8 | ຫ້ວຍຂາວ- | 791 | ປາກຊ່ອງ | 106°38'54" | 15°13'17" | ບ້ານຫ້ວຍສາດ |

| | | | | | | |
|---|---|---|---|---|---|---|
| | ຫ້ວຍສາດ | | | 106°41'79" | 14°21'20" | ປ່າປ້ອງກັນເຊປຽນ |
| | | | | 106°36'90" | 15°11'85" | ບ້ານຫ້ວຍກອງ |
| | | | | 106°39'42" | 15°10'50" | ບ້ານຫ້ວຍສາດ |
| 9 | ຫ້ວຍສາດ-ເຊປຽນ | 1.305 | ປາກຊ່ອງ | 106°34'91" | 15°15'49" | ບ້ານຫ້ວຍສາດ |
| | | | | 106°38'14" | 15°13'66" | ປ່າປ້ອງກັນເຊປຽນ |
| | | | | 106°32'56" | 15°13'72" | ບ້ານຫ້ວຍສາດ |
| | | | | 106°35'53" | 15°12'05" | ບ້ານເຊປຽນ |
| 10 | ເຊກະຕາມ | 2.157 | ປາກຊ່ອງ | 106°55'02" | 15°19'88" | ປ່າປ້ອງກັນເຊກະຕາມ |
| | | | | 106°60'03" | 15°15'18" | ປ່າປ້ອງກັນເຊກະຕາມ |
| | | | | 106°54'34" | 15°17'19" | ປ່າປ້ອງກັນເຊກະຕາມ |
| | | | | 106°59'02" | 15°14'11" | ບ້ານນ້ຳຫານ |
| 11 | ລຳຫ້ວຍຕອຍ | 516 | ປະທຸມພອນ | 105°96'56" | 14°91'06" | ປ່າສະຫງວນດົງຫົວສາວ |
| | | | | 105°99'22" | 14°90'26" | ປ່າສະຫງວນດົງຫົວສາວ |
| | | | | 105°95'68" | 14°90'21" | ລຳຫ້ວຍຕອຍ |
| | | | | 105°97'65" | 14°89'11" | ລຳຫ້ວຍຕອຍ |
| 12 | ດົນພູອີ່ແກ້ວ | 2.752 | ປະທຸມພອນ | 105°92'91" | 14°68'64" | ບ້ານໜອງບົວ, ຫ້ວຍແມ່ສັງ, ພອງເພາະ, ປ່າອາວ, ທ່າກວ້າງ,ຫ້ວຍຍາງ |
| | | | | 105°91'76" | 14°64'12" | |
| | | | | 105°88'95" | 14°59'74" | |
| | | | | 105°91'15" | 14°47'84" | |
| 13 | ຫ້ວຍຂະໜາດ | 316 | ໂພນທອງ | 105°62'87" | 15°25'26" | ບ້ານຂະໜາດ |
| | | | | 105°64'70" | 15°24'72" | ບ້ານຂະໜາດ |
| | | | | 105°60'85" | 15°24'56" | ບ້ານຂະໜາດ |
| | | | | 105°62'92" | 15°23'16" | ບ້ານຂະໜາດ |
| 14 | ຫ້ວຍສະໝັນ | 727 | ໂພນທອງ | 105°63'94" | 15°22'59" | ບ້ານສະໝັນ |
| | | | | 105°65'53" | 15°26'64" | ບ້ານສະໝັນ |
| | | | | 105°62'28" | 15°17'94" | ບ້ານສະໝັນ |
| | | | | 105°67'38" | 15°17'47" | ບ້ານສະໝັນ |
| 15 | ຫ້ວຍພະລີງ | 948 | ໂພນທອງ | 105°68'35" | 15°15'84" | ບ້ານຈີກ |
| | | | | 105°72'89" | 15°12'77" | ບ້ານຫຼັກ 12 |
| | | | | 105°67'60" | 15°15'14" | ບ້ານພະລີງ |
| | | | | 105°69'93" | 15°11'27" | ບ້ານແກ |
| 16 | ຍອດຫ້ວຍ | 5.140 | ໂພນທອງ | 105°67'91" | 15°02'70" | ບ້ານນາສີມທ້ອງ |

| | | | | | | |
|---|---|---|---|---|---|---|
| | ວັງເຫ | | | 105°67'03"<br>105°69'81"<br>105°67'03" | 15°02'70"<br>15°01'51"<br>14°95'61" | ຊາຍແດນເມືອງຈຳປາສັກ<br>ບ້ານອ່າງຄຳ<br>ປ່າປ້ອງກັນຊາຍແດນ |
| 17 | ລຳຫ້ວຍ ກະຫລາ | 11.109 | ຈຳປາສັກ | 105°65'05<br>105°69'73"<br>105°56'53"<br>105°60'93" | 14°96'17"<br>14°71'71"<br>14°86'21"<br>14°78'95" | ຊາຍແດນເມືອງໂພນທອງ<br>ຊາຍແດນເມືອງສຸຂຸມາ<br>ບ້ານເມີຍ<br>ປ່າປ້ອງກັນຊາຍແດນ |
| 18 | ລຳຫ້ວຍໄລ່-ຫ້ວຍລ້ຽວ | 1.068 | ຈຳປາສັກ | 105°73'81"<br>105°81'68"<br>105°71'29"<br>105°72'28" | 14°85'91"<br>14°83'94"<br>14°82'84"<br>14°81'36" | ປ່າສະຫງວນພູເກົ້າ-ມະໂລງ<br>ຊາຍແດນເມືອງສຸຂຸມາ<br>ບ້ານໂນນສະຫວ່າງ<br>ບ້ານເມີຍ |
| 19 | ລຳຫ້ວຍທ່າ ແຕງຕອນເທິງ | 314 | ຈຳປາສັກ | 105°81'54"<br>105°81'69"<br>105°77'51"<br>105°87'61" | 14°84'85"<br>14°83'92"<br>14°83'54"<br>14°81'59" | ປ່າສະຫງວນພູເກົ້າ-ມະໂລງ<br>ບ້ານໂນນທາຍ<br>ບ້ານໜອງສະ<br>ປ່າປ້ອງກັນລຳຫ້ວຍໄລ່ |
| 20 | ລຳຫ້ວຍ ສະທົວ | 1.787 | ຈຳປາສັກ | 105°85'06"<br>105°87'12"<br>105°81'95"<br>105°81'52" | 14°17'29"<br>14°85'76"<br>14°86'87"<br>14°84'89" | ບ້ານໄຮ່<br>ບ້ານໜອງສະ<br>ຫ້ວຍສະທົວ<br>ປ່າສະຫງວນພູເກົ້າ-ມະໂລງ |
| 21 | ລຳຫ້ວຍໃຜ່ | 2.283 | ສຸຂຸມາ | 105°73'93"<br>105°77'12"<br>105°71'53"<br>105°78'76" | 14°66'87"<br>14°64'86"<br>14°63'44"<br>14°59'77" | ປ່າຜະລິດໜອງຕາໂຫງກ<br>ບ້ານຫ້ວຍໃຜ່<br>ບ້ານບົກ<br>ປ່າຜະລິດໜອງຕາໂຫງກ |
| 22 | ລຳຫ້ວຍ ກະດຽນ | 14.812 | ມູນລະ ປາໂມກ | 105°76'09"<br>105°86'38"<br>105°67'38"<br>105°86'24" | 14°47'29"<br>14°33'48"<br>14°38'35"<br>14°30'94" | ຊາຍແດນເມືອງສຸຂຸມາ<br>ບ້ານປາໂມກ<br>ບ້ານເອີນແຄນ<br>ບ້ານໜອງບົວທອງ |
| 23 | ລຳຫ້ວຍແຮດ | 5.519 | ມູນລະ ປາໂມກ | 105°75'07"<br>105°76'25"<br>105°67'00"<br>105°74'01" | 14°30'29"<br>14°22'86"<br>14°26'06"<br>14°19'50" | ບ້ານສະພັງ<br>ບ້ານທ່າເກືອ<br>ບ້ານສະພັງ<br>ປ່າຜະລິດໜອງຕາໂຫງກ |
| 24 | ລຳຫ້ວຍ ລະອ໋ອກ | | ມູນລະ ປາໂມກ | 105°73'57" | 14°17'77" | ບ້ານໂພນດູ່ |

| | | | | | | |
|---|---|---|---|---|---|---|
| | | 1.758 | | 105°73'70"<br>105°69'59"<br>105°73'07" | 14°14'74"<br>14°15'05"<br>14°11'71" | ບ້ານເວີນຍາງ<br>ບ້ານນາດີ<br>ບ້ານທ່າກັ້ງ |
| 25 | ປາກເຊລຳເຜົາ | 1.512 | ມູນລະປາໂມກ | 105°68'66"<br>105°74'00"<br>105°66'23"<br>105°70'30" | 14°13'37"<br>14°09'58"<br>14°11'73"<br>14°08'78" | ບ້ານເວີນຍາງ<br>ສາຍເຊລຳເຜົາ<br>ບ້ານເວີນຍາງ<br>ບ້ານທ່າກັ້ງ |
| 26 | ລຳຫ້ວຍພາກ-ຫ້ວຍກະດັນ | 23.513 | ມູນລະປາໂມກ | 105°47'92"<br>105°62'85"<br>105°40'88"<br>105°52'13" | 14°39'03"<br>14°26'81"<br>14°29'17"<br>14°18'49" | ປ່າຜະລິດໜອງຕາໂຫງກ<br>ປ່າປ້ອງກັນເຊລຳເຜົາ<br>ປ່າຜະລິດໜອງຕາໂຫງກ<br>ປ່າປ້ອງກັນເຊລຳເຜົາ |

8. ປ່າຜະລິດແຫ່ງຊາດ 3 ແຫ່ງ = 122.633ເຮັກຕາ (ອີງຕາມ ດຳລັດເລກທີ 27/ນຍ, ລົງວັນທີ 8 ກຸມພາ 2006 ແລະ ດຳລັດເລກທີ 270/ນຍ, ລົງວັນທີ 30 ທັນວາ 2008)

| ລ/ດ | ຊື່ປ່າຜະລິດ | ເນື້ອທີ່ (ຮຕ) | ທີ່ຕັ້ງ | ຂອບເຂດ ທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ສີລີວັງເວີນ | 37.590 | ເມືອງ ຊະນະສົມບູນ ແລະ ບາຈຽງ | 105° 51' 47"<br>105°49' 15"<br>106° 05' 01"<br>105°53' 55" | 15° 23' 36"<br>15° 21' 10"<br>15° 25' 23"<br>15° 15' 52" | ຄຳບອນ ປົ່ງເກີມ<br>ແຊລະບຳ-ແກ້ງກອກ<br>ຫົວຂົວ-ແກ້ງເກ່ຍ<br>ໜອງກັ້ງ-ໝາກແງວ |
| 2 | ປະທຸມພອນ | 27.043 | ເມືອງ ປະທຸມພອນ | 105° 56' 00"<br>105°58' 16"<br>106° 12'30"<br>106° 10' 30" | 14° 41' 25"<br>14°47' 08"<br>14° 54' 10"<br>14°42' 02" | ເຜົາສຳພັນ-ນາບອນ<br>ທາງແບ່ງ 48-ທ່າຣູ້<br>ແກ້ງນາງອ່າງ<br>ພະລາຍ |
| 3 | ໜອງຕາໂງກ | 58.000 | ເມືອງ ສຸຂຸມາ, ມູນລະປະໂມກ | 105° 35' 20"<br>105° 41' 06"<br>105° 30' 08"<br>105° 30' 35" | 14°43' 44"<br>14° 40' 43"<br>14° 17' 55"<br>14° 12' 03" | ໂນນແດງເໜືອ<br>ບ້ານຫຽງ<br>ໜອງງາ<br>ກະດັ່ນ-ທ່າຫີນ |

➢ ສັງລວມເນື້ອທີ່ປ່າໄມ້ທົ່ວແຂວງຈຳປາສັກ

| ລ/ດ | ຊື່ປະເພດປ່າ | ຈຳນວນແຫ່ງ | ເນື້ອທີ່(ເຮັກຕາ) | ໝາຍເຫດ |
|---|---|---|---|---|
| 1 | ປ່າສະຫງວນແຫ່ງຊາດ | 3 | 342.011 | |
| 2 | ປ່າສະຫງວນຂອງແຂວງ | 9 | 72.110 | |
| 3 | ປ່າສະຫງວນຂອງເມືອງ | 21 | 44.159 | |
| 4 | ປ່າສະຫງວນຂອງບ້ານ | 27 | 10.875 | |
| 5 | ປ່າປ້ອງກັນແຫ່ງຊາດ | 6 | 194.503 | ກຳລັງສະເໜີ |
| 6 | ປ່າປ້ອງກັນຂອງແຂວງ | 5 | 187.529 | |
| 7 | ປ່າປ້ອງກັນຂອງເມືອງ | 26 | 88.828 | |
| 8 | ປ່າຜະລິດແຫ່ງຊາດ | 3 | 122.633 | |
| ລວມທັງໝົດ: | | 100 ແຫ່ງ = | 1.062.648 ເຮັກຕາ. | |

## ໝວດທີ 3
## ການພັດທະນາເຂດທີ່ດິນປ່າໄມ້

**ມາດຕາ 10 ການພັດທະນາທີ່ດິນປ່າໄມ້**

ຂະແໜງກະສິກຳ ແລະ ປ່າໄມ້ເປັນຜູ້ພັດທະນາທີ່ດິນປ່າໄມ້ ໂດຍສ້າງກົນໄກປະສານງານລະຫວ່າງຂະແໜງການອື່ນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາທີ່ດິນປ່າໄມ້ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການກ່ຽວກັບການຮັກສາ, ປັບປຸງ ແລະ ຟື້ນຟູທີ່ດິນຢູ່ໃນສະພາບດີຂຶ້ນ, ມີມູນຄ່າເພີ່ມ ແລະ ສົມດູນກັບລະບົບນິເວດປ່າໄມ້.

**ມາດຕາ 11 ການພັດທະນາ ທີ່ດິນປ່າສະຫງວນ**

ການພັດທະນາ ທີ່ດິນປ່າສະຫງວນ ແມ່ນທຸກການເຄື່ອນໄຫວ ໃນເນື້ອທີ່ດິນທຸກຕອນທີ່ຢູ່ໃນຂອບເຂດປ່າສະຫງວນເພື່ອປັບປຸງຄຸນນະພາບດິນ, ຟື້ນຟູບູລະນະ,ປູກປ່າ ແລະປູກພືດຊະນິດຕ່າງໆ ແນໃສ່ອະນຸລັກລະບົບນິເວດຂອງປ່າໄມ້, ພັນພືດ,ພັນສັດ,ຊີວະນາໆພັນ, ມໍລະດົກ ທາງວັດທະນະທຳ, ປະຫວັດສາດ, ທຳມະຊາດ ແລະ ສິ່ງຕ່າງໆທີ່ມີຄຸນຄ່າ ຢູ່ໃນຂອບເຂດທີ່ດິນປ່າສະຫງວນ.

**ມາດຕາ 12 ການພັດທະນາ ທີ່ດິນປ່າປ້ອງກັນ**

ການພັດທະນາທີ່ດິນປ່າປ້ອງກັນ ແມ່ນທຸກການເຄື່ອນໄຫວ ໃນເນື້ອທີ່ດິນທຸກຕອນ ທີ່ຢູ່ໃນຂອບເຂດປ່າປ້ອງກັນ ເພື່ອປັບປຸງຄຸນນະພາບດິນ, ຟື້ນຟູທີ່ດິນ ແລະປ້ອງກັນການເຊາະເຈື່ອນດ້ວຍການຟື້ນຟູເຂດປ່າເຫຼົ່າ , ປ່າຊຸດໂຊມ, ປູກໄມ້ໃສ່ເຂດທີ່ດິນປ່າປອກໂຫຼ້ນ, ເຂດດິນຄ້ອຍຊັນ ແລະ ປູກພືດຊະນິດຕ່າງໆ ແນໃສ່ເຮັດໃຫ້ສະພາບດິນອຸດົມສົມບູນຂຶ້ນ,ສົມດູນກັບລະບົບນິເວດ ຂອງປ່າໄມ້ ແລະສາມາດປ້ອງກັນການເຊາະເຈື່ອນຂອງດິນໄດ້.

**ມາດຕາ 13 ການພັດທະນາ ທີ່ດິນປ່າຜະລິດ**

ການພັດທະນາທີ່ດິນປ່າຜະລິດ ແມ່ນທຸກການເຄື່ອນໄຫວ ເພື່ອປັບປຸງຄຸນະພາບດິນ, ຟື້ນຟູ, ບູລະນະທີ່ດິນໃນເຂດປ່າຜະລິດໃຫ້ອຸດົມສົມບູນ ແນໃສ່ປູກໄມ້ຊະນິດຕ່າງໆ ທີ່ເໝາະສົມກັບເງື່ອນໄຂດິນຟ້າອາກາດ ເພື່ອເພີ່ມຄຸນນະພາບ, ປະລິມານໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ສາມາດຕອບສະໜອງແກ່ການພັດທະນາເສດຖະກິດ-ສັງຄົມ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.



ⅼⅴ

## ໝວດທີ 4
## ການນຳໃຊ້ ແລະການຫັນປ່ຽນ ທີ່ດິນປ່າໄມ້

**ມາດຕາ 14 ການນຳໃຊ້ທີ່ດິນປ່າໄມ້.**

ລັດອະນຸຍາດໃຫ້ການຈັດຕັ້ງພາກລັດ, ການຈັດຕັ້ງສັງຄົມ, ນິຕິບຸກຄົນ ແລະ ບຸກຄົນ ນຳໃຊ້ທີ່ດິນປ່າໄມ້ທີ່ເປັນທີ່ດິນປອກໂຫຼ້ນ ຫຼື ປ່າຊຸດໂຊມຢ່າງຖືກຕ້ອງຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂອບເຂດການນຳໃຊ້ທີ່ດິນປ່າໄມ້**

ອົງການປົກຄອງເມືອງ ແລະ ນະຄອນ ສົມທົບກັບກຸ່ມບ້ານ, ອົງການປົກຄອງບ້ານ ເປັນຜູ້ພິຈາລະນາ ແລະ ນຳສະເໜີ ເພື່ອມອບສິດນຳໃຊ້ທີ່ດິນປ່າໄມ້ ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ການຈັດຕັ້ງ ແລະ ບຸກຄົນນຳໃຊ້ເພື່ອຟື້ນຟູປ່າ, ປູກໄມ້ ຫຼື ເຄື່ອງປ່າຂອງດົງ ແລະ ປູກພືດຊະນິດຕ່າງໆ ແນໃສ່ການອະນຸລັກລະບົບນິເວດຂອງປ່າໄມ້ ໂດຍອອກໃບຢັ້ງຢືນໃຫ້. ໃບຢັ້ງຢືນທີ່ດິນນີ້ມີອາຍຸສາມປີ, ຖ້າວ່າພາຍໃນກຳນົດດັ່ງກ່າວຫາກນຳໃຊ້ຖືກຕ້ອງຕາມເປົ້າໝາຍຕາມລະບຽບການ ໂດຍການເຫັນດີຂອງພະແນກ ກະສິກຳ ແລະ ປ່າໄມ້ກ່ອນ, ຈຶ່ງສະເໜີຂໍສິດນຳໃຊ້ຢ່າງຍາວນານນຳພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໃບອະນຸຍາດນຳໃຊ້ດິນດັ່ງກ່າວບໍ່ສາມາດຊື້-ຂາຍ ແລະ ຊວດຈຳໄດ້, ຊຶ່ງການອະນຸຍາດດັ່ງກ່າວແມ່ນໃຫ້ສະເພາະແຕ່ໃນເຂດຄຸ້ມຄອງນຳໃຊ້ຂອງສາມປະເພດປ່າ (ສະເພາະຄົນໃນພື້ນທີ່ ເທົ່ານັ້ນ).

**ມາດຕາ 16 ການນຳໃຊ້ ທີ່ດິນປ່າໄມ້ຕາມປະເພນີ**

ການນຳໃຊ້ທີ່ດິນປ່າໄມ້ຕາມປະເພນີ ແມ່ນການຊົມໃຊ້ທີ່ດິນປ່າໄມ້ທີ່ເຄີຍປະຕິບັດກັນມາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ. ລັດອະນຸຍາດເພື່ອຊົມໃຊ້ໃນຄອບຄົວ ແລະ ສາທາລະນະປະໂຫຍດລວມຂອງບ້ານ, ແຕ່ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້, ສິ່ງແວດລ້ອມ ແລະ ບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດຂອງບຸກຄົນ ຫຼືການຈັດຕັ້ງອື່ນ. ການຊົມໃຊ້ທີ່ດິນປ່າໄມ້ ຕາມປະເພນີແມ່ນຕ້ອງປະຕິບັດຕາມແຜນຈັດສັນ ແລະ ກົດລະບຽບຂອງບ້ານທີ່ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້.

**ມາດຕາ 17 ການຫັນປ່ຽນປະເພດທີ່ດິນປ່າໄມ້**

ການຫັນປ່ຽນທີ່ດິນປ່າໄມ້ ໄປເປັນດິນປະເພດອື່ນ ຈະດຳເນີນໄດ້ ກໍຕໍ່ເມື່ອຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຊຶ່ງເປັນສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ແລະ ໃຫ້ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ການຫັນປ່ຽນດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດຕົກລົງ ຕາມທີ່ກຳນົດໄວ້ ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ຫັນປ່ຽນປະເພດທີ່ດິນປ່າໄມ້ ຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍສິ້ນເປືອງເປັນຕົ້ນ: ຄ່າບໍລິການດ້ານວິຊາການ, ຄ່າບູລະນະຟື້ນຟູ, ຄ່າທຳນຽມການຫັນປ່ຽນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ອົງການທີ່ມີສິດໃນການຫັນປ່ຽນທີ່ດິນປ່າໄມ້**

ສະພາປະຊາຊົນຂັ້ນແຂວງ ຕົກລົງຫັນປ່ຽນທີ່ດິນປ່າໄມ້ ໄປເປັນດິນປະເພດອື່ນ ຕາມການສະເໜີຂອງອົງການປົກຄອງແຂວງ ດັ່ງນີ້:

1. ທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນເອງໄດ້ ເນື້ອທີ່ບໍ່ເກີນ ໜຶ່ງຮ້ອຍເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ;
2. ທີ່ດິນປ່າປອກໂຫຼ້ນ ເນື້ອທີ່ແຕ່ ສາມສິບ ຫາ ສອງຮ້ອຍ ເຮັກຕາ ຕໍ່ ໜຶ່ງກິດຈະການ ເທົ່ານັ້ນ.

ສ່ວນການຫັນປ່ຽນທີ່ດິນປ່າໄມ້ທີ່ນອນໃນເຂດປ່າສະຫງວນແຫ່ງຊາດ ແລະ ປ່າຜະລິດແຫ່ງຊາດ ແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍປ່າສະຫງວນສະບັບເລກທີ 134/ລບ, ລົງວັນທີ 15 ພຶດສະພາ 2015 ແລະ ດຳລັດວ່າດ້ວຍການຄຸ້ມຄອງປ່າຜະລິດແບບຍືນນານ ສະບັບເລກທີ 59/ນຍ, ລົງວັນທີ 2 ພຶດສະພາ 2002.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມສໍາລັບພະນັກງານ**

ຫ້າມພະນັກງານລັດ ມີພຶດຕິກໍາດັ່ງນີ້:

1. ສວຍໃຊ້ໜ້າທີ່ຕໍາແໜ່ງ ແລະ ຮັບສິນບົນ ກ່ຽວກັບວຽກງານ ການຄຸ້ມຄອງ ແລະ ພັດທະນາທີ່ດິນປ່າໄມ້;

2. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງປະຊາຊົນ;

3. ປະລະໜ້າທີ່ຕໍ່ວຽກງານຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາທີ່ດິນປ່າໄມ້ທີ່ການຈັດຕັ້ງມອບໝາຍໃຫ້;

4. ປອມແປງເອກະສານ,ດໍາເນີນ ຫຼື ເຂົ້າຮ່ວມການດໍາເນີນທຸລະກິດກ່ຽວກັບທີ່ດິນປ່າໄມ້;

5. ຍ້າຍ,ປ່ຽນແປງ ຫຼື ທໍາລາຍ ເຄື່ອງໝາຍເຂດແດນທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ ແລະ ທີ່ດິນປ່າ ຜະລິດ;

6. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນໍາໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ມີພຶດຕິກໍາອື່ນທີ່ເປັນຂໍ້ຫ້າມຊຶ່ງໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ຂໍ້ຫ້າມສໍາລັບນິຕິບຸກຄົນ ແລະ ນັກທຸລະກິດ**

ຫ້າມສໍາລັບນິຕິບຸກຄົນ ແລະ ນັກທຸລະກິດ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນການສໍາຫຼວດ ແລະ ຈັບຈອງທີ່ດິນປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກການຈັດຕັ້ງຂອງລັດ ທີ່ມີ ສິດອໍານາດ;

2. ບຸກເບີກທີ່ດິນປ່າໄມ້ ນອກເຂດທີ່ອະນຸຍາດ;

3. ປອມແປງເອກະສານກ່ຽວກັບທີ່ດິນປ່າໄມ້;

4. ໃຊ້ຄວາມຮຸນແຮງ ແລະ ແອບອ້າງ ຊື່ຜູ້ອື່ນ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ ຫຼື ປະຊາຊົນ;

5. ມີພຶດຕິກໍາອື່ນທີ່ເປັນຂໍ້ຫ້າມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມສໍາລັບບຸກຄົນທົ່ວໄປ**

ຫ້າມບຸກຄົນທົ່ວໄປ ມີພຶດຕິກໍາ ດັ່ງນີ້:

1. ເຂົ້າໄປຕັ້ງຖິ່ນຖານຢູ່ໃນເຂດທີ່ດິນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຫຼື ທໍາການຜະລິດ ໂດຍບໍ່ ໄດ້ຮັບອະນຸຍາດ;

2. ທໍາລາຍປ່າໄມ້ ດ້ວຍການບຸກລຸກ, ບຸກເບີກ ຖາກຖາງປ່າໄມ້,ຈູດປ່າ, ຕັດໄມ້,ການໄມ້ ຫຼື ນໍາໃຊ້ສານເຄມີ ໃຫ້ຕົ້ນໄມ້ຕາຍ ແລະ ທໍາລາຍດ້ວຍວິທີອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຈັບຈອງຕົ້ນໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້;

4. ຮ່ວມມືກັບນັກທຸລະກິດ, ພະນັກງານ ຫຼື ເຈົ້າໜ້າທີ່ໃນການລັກລອບຕັດໄມ້, ບຸກລຸກທໍາລາຍປ່າໄມ້ ແລະ ຈັບຈ່ອງເອົາທີ່ດິນປ່າໄມ້;

5. ປອມແປງເອກະສານ, ຕາປະທັບ ແລະ ອື່ນໆ;

6. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ;

7. ຍ້າຍ, ປ່ຽນແປງ ຫຼື ທໍາລາຍເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;

8. ມີພຶດຕິກໍາອື່ນທີ່ເປັນຂໍ້ຫ້າມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ອົງການຄຸ້ມຄອງ ແລະ ກວດກາທີ່ດິນປ່າໄມ້

**ມາດຕາ 22 ອົງການຄຸ້ມຄອງທີ່ດິນປ່າໄມ້**

ອົງການຄຸ້ມຄອງທີ່ດິນປ່າໄມ້ ປະກອບມີ:

1. ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ;
3. ໜ່ວຍງານປ່າໄມ້ບ້ານ.

ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ໜ່ວຍງານປ່າໄມ້ບ້ານ ໃນການຄຸ້ມຄອງ ແລະ ກວດກາທີ່ດິນປ່າໄມ້ແມ່ນອັນດຽວກັນ ຕາມທີ່ກຳນົດໄວ້ໃນ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງທີ່ດິນປ່າໄມ້**

ອົງການຄຸ້ມຄອງທີ່ດິນປ່າໄມ້ປ່າໄມ້ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້;
2. ກວດກາກິດຈະການແລະໂຄງການທີ່ດິນປ່າໄມ້ແລະ ອື່ນໆ;
3. ດຳເນີນການສືບສວນ-ສອບສວນຄະດີກ່ຽວກັບທີ່ດິນປ່າໄມ້ ໂດຍນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ;
4. ສະເໜີ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອອອກຄຳສັ່ງໃຫ້ຢຸດເຊົາການເຄື່ອນໄຫວກ່ຽວກັບກິດຈະການ, ຖ້າເຫັນວ່າມີການກະທຳທີ່ຂັດກັບກົດໝາຍ;
5. ພົວພັນ, ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ;
6. ສະຫລຸບຜົນຂອງການປະຕິບັດວຽກງານກວດກາ ແຕ່ລະໄລຍະໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 ອົງການກວດກາ**

ອົງການກວດກາ ທີ່ດິນປ່າໄມ້ ປະກອບດ້ວຍ:

1. ອົງການກວດກາພາຍໃນ;
2. ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.

ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ, ພະແນກກວດກາລັດແຂວງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 25 ຮູບການກວດກາ**

ການກວດກາທີ່ດິນປ່າໄມ້ມີສາມຮູບການດັ່ງນີ້:

1. ການກວດກາຕາມປົກກະຕິແມ່ນການກວດກາທີ່ມີລັກສະນະກວດກາຢ່າງເປັນປະຈຳ ແບບມີກຳນົດເວລາແນ່ນອນຊຶ່ງຕ້ອງປະຕິບັດຢ່າງໜ້ອຍສອງຄັ້ງຕໍ່ປີ;
2. ການກວດກາໂດຍມີການແຈ້ງລ່ວງໜ້າ ແມ່ນການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຮັບຜິດຊອບ ໃນການປົກປັກຮັກສາ ແລະພັດທະນາຫຼືດຳເນີນກິດຈະການປ່າໄມ້ຮູ້ລ່ວງໜ້າຢ່າງໜ້ອຍຊາວສີ່ຊົ່ວໂມງ;

3. ການກວດກາແບບກະທັນຫັນ ແມ່ນການກວດກາ ເມື່ອຫາກເຫັນວ່າມີຄວາມຈຳເປັນ ແລະ ມີແຫຼ່ງຂ່າວຂໍ້ມູນ, ແຕ່ການລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຮັບຜິດຊອບ ໃນການປົກປັກຮັກສາ ແລະພັດທະນາ ຫຼື ດຳເນີນກິດຈະການປ່າໄມ້ຮູ້ລ່ວງໜ້າ.

ການກວດກາ ໃຫ້ດຳເນີນທັງການກວດກາ ເອກະສານ ແລະການລົງກວດກາການປະຕິບັດຕົວຈິງຢູ່ຕາມພື້ນທີ່ປະຕິບັດງານ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ນະໂຍບາຍ ຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ເປັນຕົ້ນໃນການປົກປັກຮັກສາ ແລະ ພັດທະນາທີ່ດິນປ່າໄມ້, ຟື້ນຟູທີ່ດິນປ່າໄມ້ ແລະ ປ້ອງກັນການບຸກລຸກທຳລາຍທີ່ດິນປ່າໄມ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ນຳໃຊ້ທີ່ດິນປ່າໄມ້ ຫາກລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ສາທາລະນະ, ສິ່ງແວດລ້ອມ,ສຸຂະພາບ ຫຼື ຊີວິດຂອງຜູ້ອື່ນຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີໜັກ ຫຼື ເບົາ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກກະສິກຳ ແລະປ່າໄມ້ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງ ໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ເຈົ້າແຂວງ**

ແຂວງຈຳປາສັກ
ເຈົ້າແຂວງ

ປອ. ບຸນທອງ ດີວິໄຊ